# ຫຼັກຈັນຍາບັນການດຳເນີນທຸລະກິດສຳລັບຜູ້ຈຳໜ່າຍຂອງ Aeon

## 1. ກົດຫມາຍ ແລະ ກົດລະບຽບ

ປະຕິບັດຕາມກົດຫມາຍແລະລະບຽບການ,ກົດຂໍ້ບັງຄັບ,ແລະກົດລະບຽບທັງໝົດທີ່ຖືກນຳໃຊ້ໃນປະເທດແລະທ້ອງຖິ່ນທີ່ຈະດຳເນີນກິດຈະກຳທາງທຸລະກິດ. ນອກຈາກນີ້,ຍັງຂໍຮ້ອງໃຫ້ຜູ້ຈຳໜ່າຍ, ບ່ອນທີ່ຮັບເໝົາວຽກໄປເຮັດອີກຕໍ່ຫນຶ່ງແລະບ່ອນທີ່ຮັບເໝົາຂອງບໍລິສັດຕົນເອງ ປະຕິບັດຕາມກົດໝາຍແລະລະບຽບການຕ່າງໆເຫຼົ່ານັ້ນແລະຫຼັກຈັນຍາບັນການດຳເນີນທຸລະກິດສາລັບຜູ້ຈາໜ່າຍຂອງ Aeon.

## 2. ແຮງງານເດັກນ້ອຍ

ບໍ່ນຳໃຊ້ ຫຼື ສະໜັບສະໜູນການນຳໃຊ້ເດັກນ້ອຍທີ່ມີອາຍຸບໍ່ເຖິງອາຍຸສູງ ຫຼື 15ປີຫຼືຢ່າງໃດຢ່າງໜຶ່ງທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ພາຍໃຕ້ກົດໝາຍແລະລະບຽບການຂອງປະເທດດັ່ງກ່າວ.ຜູ້ທີ່ມີອາຍຸທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຫຼືຈ້າງງານພາຍໃຕ້ກົດໝາຍແລະລະບຽບການ ຫຼື ອາຍຸຫຼາຍກວ່ານັ້ນແລະຕ່ຳກວ່າ18ປີ,ກໍລະນີທີ່ເປັນເປົ້າໝາຍຂອງກົດໝາຍວ່າດ້ວຍການສຶກສາພາກບັງຄັບ, ແມ່ນໃຫ້ຄວາມສຳຄັນຕໍ່ການເຂົ້າໂຮງຮຽນຫຼາຍກວ່າ ແລະ ບໍ່ເຮັດເຂົາເຈົ້າໃຫ້ຢູ່ໃນສະຖານະການທີ່ມີຜົນເສຍ ຫຼື ເປັນອັນຕະລາຍຕໍ່ສຸຂະພາບ ແລະ ພັດທະນາການທາງຮ່າງກາຍແລະຈິດໃຈຂອງເຂົາເຈົ້າ.

## 3. ແຮງງານບັງຄັບ

ບໍ່ບັງຄັບ ຫຼື ສົມຮູ້ຮ່ວມຄິດໃນການຈ້າງງານ ຫຼື ແຮງງານທີ່ຂັດກັບຄວາມຕັ້ງໃຈຂອງພະນັກງານໂດຍການທຳຮ້າຍຮ່າງກາຍ, ການຂົ່ມຂູ່ , ການກັກຂັງ ແລະ ວິທີການອື່ນໆທີ່ຈຳກັດອິດສະລະພາບທາງຈິດໃຈ, ຮ່າງກາຍ ແລະ ການປະຕິບັດໃນຂະບວນການຮັບເຂົ້າເຮັດວຽກແລະຈ້າງງານ.

## 4. ຊົ່ວໂມງເຮັດວຽກ

ປະຕິບັດຕາມກົດໝາຍ-ລະບຽບການແລະມາດຕະຖານອຸດສາຫະກຳທີ່ກ່ຽວຂ້ອງກັບຊົ່ວໂມງເຮັດວຽກ,ການພັກຜ່ອນ ແລະ ມື້ພັກ. ການເຮັດວຽກລ່ວງເວລາຕ້ອງເປັນສິ່ງທີ່ເປັນໄປຕາມຄວາມສະໝັກໃຈ ແລະ ບໍ່ແມ່ນສິ່ງທີ່ຖືກຮຽກຮ້ອງເປັນປະຈຳ. ຊຳລະຄ່າຕອບແທນການລ່ວງເວລາຕາມທີ່ໄດ້ກຳນົດສຳລັບແຮງງານທີ່ໄດ້ເກີນຊົ່ວໂມງເຮັດວຽກຕາມກົດໝາຍ.

## 5. ຄ່າແຮງງານ ແລະ ສະຫວັດດີການ

ປະຕິບັດຕາມກົດໝາຍແລະລະບຽບການທີ່ກ່ຽວຂ້ອງກັບຄ່າແຮງງານແລະສະຫວັດດີການຂອງປະເທດ. ດຳເນີນການຊຳລະແລະຫັກຄ່າແຮງງານແລະຄ່າຕອບແທນຕ່າງໆ,ເກັບຮັກສາບັນທຶກໄວ້ພາຍໃຕ້ກົດຫມາຍ-ລະບຽບການທີ່ກ່ຽວຂ້ອງ. ຄ່າແຮງງານແມ່ນສິ່ງທີ່ເກີນກວ່າການຕອບສະໜອງຄວາມຕ້ອງການຂັ້ນພື້ນຖານຂອງພະນັກງານ. ອະທິບາຍເນື້ອໃນຂອງຄ່າແຮງງານທີ່ໄດ້ຊຳລະລວມທັງຄ່າຕອບແທນທີ່ຄິດໄລ່ເພີ່ມຕາມການລ່ວງເວລາດ້ວຍວິທີການທີ່ພະນັກງານສາມາດເຂົ້າໃຈໄດ້.

## 6. ການຂົ່ມເຫັງ ແລະ ການລ່ວງລະເມີດ

ບໍ່ດຳເນີນການລົງໂທດທາງຮ່າງກາຍ, ບີບບັງຄັບທາງຈິດໃຈຫຼືຮ່າງກາຍ ແລະ ຂົ່ມເຫັງໂດຍຄຳເວົ້າຕໍ່ພະນັກງານ, ກ່ຽວຂ້ອງ ຫຼື ສົມຮູ້ຮ່ວມຄິດໃນສິ່ງດັ່ງກ່າວ. ການກະທຳທີ່ເປັນການລ່ວງລະເມີດໃດໆ ລວມທັງການສະແດງທ່າທີ, ພາສາ, ການສຳຜັດຮ່າງກາຍໃນສະຖານະການທັງໝົດຂອງກິດຈະກຳທາງທຸລະກິດກໍ່ບໍ່ອະນຸຍາດໃຫ້ເຮັດ.

## 7. ການແບ່ງແຍກ

ບໍ່ແບ່ງແຍກກ່ຽວກັບການຈ້າງງານ ເຊັ່ນ ການຮັບເຂົ້າເຮັດວຽກ, ຄ່າແຮງງານ, ການເລື່ອນຕຳແໜ່ງ, ການຝຶກຊ້ອມ, ການອອກຈາກວຽກ,ການລາອອກຈາກວຽກໂດຍຖືເອົາເຊື້ອຊາດ,ສັນຊາດ, ຊົນເຜົ່າ,ເພດ,ອາຍຸ ,ບ້ານເກີດ,ສາສະຫນາ, ປະຫວັດການສຶກສາ, ຄວາມພິການທາງຮ່າງກາຍແລະຈິດໃຈ, ລັດທິນິຍົມທາງເພດ, ການຮັບຮູ້ວ່າຕົນເອງເປັນເພດໃດແລະອື່ນໆມາເປັນເຫດຜົນ ຫຼື ບໍ່ສົມຮູ້ຮ່ວມຄິດໃນການແບ່ງແຍກດັ່ງກ່າວ.ໃນການພິຈາລະນາທັງໝົດທີ່ກ່ຽວຂ້ອງກັບການຈ້າງງານ, ໃຫ້ຖືເອົາຄວາມສາມາດໃນການປະຕິບັດຈົນບັນລຸໜ້າທີ່ທີ່ຈຳເປັນເປັນມາດຕະຖານ.

## 8. ອິດສະລະພາບໃນການຈັດຕັ້ງສະມາຄົມ ແລະ ສິດທິໃນການເຈລະຈາຕໍ່ລອງເປັນກຸ່ມ

ເຄົາລົບສິດທິຂອງພະນັກງານໃນການຈັດຕັ້ງ,ເຂົ້າຮ່ວມເປັນສະມາຊິກແລະບໍລິຫານງານກຳມະບານແຮງງານທີ່ພະນັກງານໄດ້ເລືອກດ້ວຍຕົນເອງ ແລະ ເຈລະຈາຕໍ່ລອງເປັນກຸ່ມກັບບໍລິສັດໃນນາມເປັນຕົວແທນຂອງພະນັກງານ. ກໍລະນີທີ່ມີການຈຳກັດດ້ານອິດສະລະພາບໃນການຈັດຕັ້ງສະມາຄົມແລະສິດທິໃນການເຈລະຈາຕໍ່ລອງເປັນກຸ່ມໂດຍກົດໝາຍແລະລະບຽບການ, ໃຫ້ສ້າງລະບົບຈັດການຄຳຮ້ອງທຸກ ເພື່ອສະເໜີຄວາມກັງວົນຕໍ່ຂັ້ນບໍລິຫານແລະຕົວແທນພະນັກງານ ແລະ ຮັບມືດ້ວຍຄວາມຈິງໃຈໃນຖານະທີ່ເປັນວິທີການທົດແທນ.

## 9. ຄວາມປອດໄພ ແລະ ສຸຂະອະນາໄມ

ສະໜອງສະພາບແວດລ້ອມບ່ອນເຮັດວຽກທີ່ປອດໄພແລະຖືກຫຼັກອະນາໄມທີ່ສອດຄ່ອງກັບກົດໝາຍແລະລະບຽບການ ແລະ ກົດລະບຽບທີ່ຈະຖືກນຳໃຊ້ , ພ້ອມທັງ ນຳໃຊ້ມາດຕະການທີ່ມີປະສິດທິຜົນເພື່ອປ້ອງກັນອຸບັດຕິເຫດ, ການບາດເຈັບ ແລະ ພະຍາດທາງຈິດໃຈທີ່ກ່ຽວຂ້ອງກັບຄວາມປອດໄພແລະສຸຂະອະນາໄມທີ່ອາດເກີດຂຶ້ນໄດ້. ທັງຫໍພັກແລະທັງໂຮງອາຫານທີ່ໄດ້ສະໜອງໃຫ້ພະນັກງານກໍໃຫ້ນຳໃຊ້ມາດຕະຖານດ້ານຄວາມປອດໄພແລະສຸຂະອະນາໄມແບບດຽວກັນ.

## 10. ສິ່ງແວດລ້ອມ

ບໍ່ພຽງແຕ່ປະຕິບັດຕາມກົດຫມາຍແລະລະບຽບການທັງໝົດແລະອື່ນໆທີ່ກ່ຽວຂ້ອງກັບສິ່ງແວດລ້ອມຂອງປະເທດແລະທ້ອງຖິ່ນທີ່ຈະດຳເນີນການຜະລິດເທົ່ານັ້ນ, ໃຫ້ຄຳນຶງເຖິງຄວາມປອດໄພດ້ານສິ່ງແວດລ້ອມຢ່າງສູງທີ່ສຸດ. ກວດກາຄືນວ່າ ວັດຖຸດິບແລະອາໄຫລ່ທີ່ຈະນຳໃຊ້ນັ້ນໄດ້ສອດຄ່ອງກັບກົດໝາຍແລະລະບຽບການ, ຂໍ້ບັງຄັບ, ສົນທິສັນຍາສາກົນ, ອະນຸສັນຍາຂອງປະເທດແລະທ້ອງຖິ່ນທີ່ຮັບປະກັນສິ່ງເຫຼົ່ານັ້ນ ແລະ ປະຕິບັດຕາມນະໂຍບາຍທີ່ກ່ຽວຂ້ອງກັບສິ່ງແວດລ້ອມທີ່ Aeon ກຳນົດ.

## 11. ການດຳເນີນທຸລະກິດທາງການຄ້າ

ປະຕິບັດຕາມກົດໝາຍແລະລະບຽບການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດທາງການຄ້າຂອງປະເທດແຫລ່ງຜະລິດສິນຄ້າຂັ້ນສຸດທ້າຍແລະຜະລິດຕະພັນທີ່ເປັນສ່ວນປະກອບ, ປະເທດຜູ້ສົ່ງອອກ ແລະ ທ້ອງຖິ່ນ.

## 12. ຄວາມຈິງໃຈ ແລະ ຄວາມໂປ່ງໃສ

ໃນກິດຈະກຳທາງທຸລະກິດທັງໝົດ, ບໍ່ປະຕິບັດການກະທຳທີ່ລະເມີດຕໍ່ຈັນຍາບັນຢ່າງເດັດຂາດ ເຊັ່ນ ການກະທຳທີ່ເປັນການໃຫ້ສິນບົນ, ການປອມແປງ, ການປອມ ແລະ ການປົກປິດບັນທຶກ, ຫຼັກຖານທາງວັດຖຸ ແລະ ຄຳໃຫ້ການຕ່າງໆ. ຂໍ້ມູນທີ່ກ່ຽວຂ້ອງກັບກິດຈະກຳທາງທຸລະກິດໃຫ້ເປີດເຜີຍຢ່າງຖືກຕ້ອງຕາມຂໍ້ບັງຄັບທີ່ຈະຖືກນຳໃຊ້ ແລະ ປະເພນີການດຳເນີນທຸລະກິດທົ່ວໄປ.

## 13. ຄຳໝັ້ນສັນຍາ

ນຳເອົາເນື້ອໃນການຮຽກຮ້ອງດ້ານຫຼັກຈັນຍາບັນການດຳເນີນທຸລະກິດສຳລັບຜູ້ຈຳໜ່າຍຂອງ Aeon ເຂົ້າໄປໃຊ້ໃນລະບົບການຈັດການຂອງບໍລິສັດຕົນເອງ ແລະ ອົງກອນຕົນເອງ, ແລະ ພະຍາຍາມແກ້ໄຂສິ່ງທ້າທາຍທາງສັງຄົມໃນທົ່ວຕ່ອງໂສ້ການຈຳໜ່າຍດ້ວຍອົງກອນທັງໝົດ.